# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 13 ເມສາ 2008 (04-13-2008)

## ຄົ້ນຫາການຖວາຍຕົວ

**ຂໍ້ພຣະຄັມພີໃນບົດຮຽນ:** ປະຖົມມະການ 22:1-14, 17-18

**ຄໍາຖາມຊີວິດ:** ທ່ານຈະຍອມຫລາຍເທົ່າໃດໃນການຖວາຍຕົວຕໍ່ພຣະເຈົ້າ?

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າທົດສອບຄົນຂອງພຣະອົງໃນການຖວາຍຕົວຂອງເຂົາຕໍ່ພຣະອົງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ອຍໃຫ້ທ່ານຄົ້ນຫາຫົນທາງໃໝ່ໃນຄວາມເຊື່ອຂອງທ່ານໂດຍ:

- ພິຈາຣະນາເບິ່ງວ່າພຣະເຈົ້າອາດຈະທົດສອບການຖວາຍຕົວຂອງທ່ານທີ່ມີຕໍ່ພຣະອົງ
- ຕັ້ງສິນໃຈວ່າຈະໃຫ້ການຖວາຍຂອງທ່ານຈະເຣີນຂຶ້ນໃນເວລາທ່ານຖືກທົດລອງ.

ທ່ານຈື່ໄດ້ບໍ່ວ່າທ່ານມີຄວາມຮູ້ສຶກຢ່າງໃດເມື່ອທ່ານໄດ້ມີການສອບເສັງຄັ້ງຍິ່ງໃຫຍ່ເວລາທ່ານຍັງຮຽນໜັງສືຢູ່ໃນໂຮງຮຽນ? ບາງຄົນກໍຕອບສນອງຕໍ່ການສອບເສັງຫລາຍໆວິທີ: ເຊັ່ນບາງຄົນຢ້ານເພາະຕົວເອງບໍ່ຕຽມພ້ອມ, ບາງຄົນກະວົນກະວາຍເພາະບໍ່ຮູ້ວ່າການສອບເສັງຈະອອກມາໃນຮູບໃດ.

ຫລາຍໆຄົນໄດ້ຕອບສນອງຕໍ່ການສອບເສັງໃນຫລາຍຮູບແບບ, ແຕ່ໃນເມື່ອການສອບນັ້ນມາຈາກພຣະເຈົ້າ ສິ່ງນັ້ນກໍເຫັນວ່າເປັນສິ່ງດີໃນຊີວິດຂອງເຮົາ. ເໝືອນທ່ານອັບຣາຮາມໄດ້ມີປະສົບການ ທີ່ພຣະເຈົ້າໄດ້ທົດສອບການຖວາຍຂອງລາວຕໍ່ພຣະເຈົ້າ. ພຣະເຈົ້າໄດ້ບອກໃຫ້ອັບຣາຮາມຖວາຍລູກຊາຍຜູ້ມີຊື່ວ່າອີຊາກເທິງພູເຂົາ. ທ່ານຈະເຮັດຢ່າງໃດໃນເມື່ອພຣະເຈົ້າເອີ້ນທ່ານໃຫ້ເຮັດເຊັ່ນນັ້ນ? ທ່ານຈະພັດທະນາຄວາມເຊື່ອໃຫ້ຈະເຣີນຂຶ້ນເໝືອນອັບຣາຮາມໄດ້ຢ່າງໃດ?

## ສຶກສາພຣະຄັມພີ

### 1. ຄວາມເຊື່ອໄດ້ຖືກທົດສອບ (ປະຖົມກະການ 22:1-2)

ໃນປະຖົມມະການ 17:4-5, ພຣະເຈົ້າໄດ້ປ່ຽນຊື່ຂອງ**ອັບຣາມມາເປັນອັບຣາຮາມ** (ທີ່ມີຄວາມໝາຍວ່າ "ພໍ່ຂອງຄົນຫລາຍຊາດ") ແຕ່ແນວໃດກໍຕາມໃນເວລານັ້ນລາວຍັງບໍ່ມີລູກຜູ້ທີ່ຈະສືບເຊື້ອສາຍເລີຍ. ໃນທີ່ສຸດພຣະເຈົ້າໄດ້ປະທານໃຫ້ສອງຜົວເມັຽ ອັບຣາຮາມແລະນາງຊາຣາໃຫ້ມີລູກຊາຍຄົນນຶ່ງຜູ້ມີຊື່ວ່າອີຊາກ, ຜູ້ເປັນລູກແຫ່ງພຣະສັນຍາ. ຕອນນັ້ນອັບຣາຮາມອາຍຸໄດ້ 100 ປີ ແລະຄວາມຫວັງວ່າຈະມີລູກນັ້ນກໍເຫັນວ່າຫລຸດນ້ອຍຖອຍລົງແລ້ວ. ດັ່ງນັ້ນ ເຣື່ອງທີ່ເກີດຂຶ້ນໃນບົດ 22 ນີ້ເປັນຕອນແປກປລາດຕໍ່ອັບຣາຮາມແລະທຸກຄົນຜູ້ໄດ້ອ່ານໃນເຣື່ອງນີ້!

ພຣະເຈົ້າໄດ້ມາຫາອັບຣາຮາມ**ຫລັງຈາກສິ່ງເຫລົ່ານີ້**, ປໂຍກນີ້ໄດ້ອ້າງເຖິງການກໍາເນີດຂອງອີຊາກ, ແລະການສົ່ງອີສມາເອນໃຫ້ໜີໄປ, ແລະຄໍາສັນຍາຕໍ່ກະສັດອາບີມີເລັກ. ການທົດລອງໄດ້ກາຍເປັນສິ່ງໃຫຍ່ອີກເພາະລູກຊາຍຜູ້ທີ່ລາວຄິດວ່າເປັນຜູ້ສືບເຊື້ອສາຍໄດ້ຖືກສົ່ງໜີໄປກັບຜູ້ເປັນແມ່ນາງຮາກາ. ດັ່ງນັ້ນ, ພຣະສັນຍາຂອງພຣະເຈົ້າກໍເຫລືອຢູ່ນໍາອີຊາກ. **ພຣະເຈົ້າໄດ້ທົດລອງອັບຣາຮາມ** ແລະລາວກໍໄດ້ຕອບສນອງຕໍ່ພຣະເຈົ້າວ່າ, "**ຂ້ານ້ອຍຢູ່ທີ່ນີ້,**" ປໂຍກນີ້ໄດ້ບອກວ່າລາວຕຽມພ້ອມສເມີທີ່ຈະເຮັດຕາມຄໍາຮຽກເອີ້ນຈາກພຣະເຈົ້າ.

ພຣະເຈົ້າຕ້ອງການອັບຣາຮາມ **ໃຫ້ເອົາລູກຊາຍຄົນດຽວອີຊາກ** ແລະໃຫ້**ຖວາຍເຜົາລູກນັ້ນເປັນເຄື່ອງບູຊາ**ຕໍ່ພຣະເຈົ້າ. ພຣະເຈົ້າໄດ້ເວົ້າເຖິງຄວາມຮັກຂອງອັບຣາຮາມມີຕໍ່ອີຊາກ, ເພາະເປັນລູກທີ່ເກີດມາເວລາມີອາຍຸແກ່ຊະຣາ. ການທົດລອງຢ່າງນີ້ໄດ້ເຮັດໃຫ້ຫລາຍຄົນສັບສົນ ເພາະເວລາຕໍ່ມາພຣະເຈົ້າບອກວ່າພຣະອົງບໍ່ໄດ້ພໍພຣະທັຍກັບສິ່ງນັ້ນ (ລະບຽບພວກເລວີ 18:21; ເຢເຣມີຢາ 7:31; ເອເຊກຽນ 20:31). ເປັນດ້ວຍເຫດໃດພຣະເຈົ້າຈຶ່ງທົດສອບອັບຣາຮາມກັບສິ່ງທີ່ພຣະອົງໄດ້ຫ້າມ? ສິ່ງນີ້ກໍເຫັນໄດ້ງ່າຍວ່າພຣະເຈົ້າຢາກເຫັນການຖວາຍຕົວອັນສຸດຊີດຂອງອັບຣາຮາມ, ເພາະຄວາມສຳພັນຂອງລາວຕໍ່ພຣະເຈົ້າດີຢູ່ແລ້ວ. ແນ່ນອນພຣະເຈົ້າບໍ່ຕ້ອງການໆຖວາຍລູກ ແຕ່ອັບຣາຮາມບໍ່ໄດ້ເຂົ້າໃຈ ຈົນກວ່າການທົດສອບນັ້ນໄດ້ຜ່ານພົ້ນໄປ.

ຫລາຍເທື່ອພຣະເຈົ້າທົດສອບພວກເຮົາເພື່ອພຣະເຈົ້າຢາກຮູ້ວ່າຈິດໃຈຂອງພວກເຮົາຢູ່ໃສ. ພຣະບັດຍັດທີສອງ 8: ໒ ໄດ້ເວົ້າເຖິງເຣື່ອງນັ້ນ: "ຈົ່ງລະນຶກວ່າ ພຣະຜູ້ເປັນເຈົ້າຂອງທ່ານໄດ້ຊົງນຳພາພວກທ່ານເດີນທາງໃນຖິ່ນກັນດານຕລອດສີ່ສິບປີນັ້ນເປັນຢ່າງໃດ ພຣະອົງຊົງທົດສອບທ່ານດ້ວຍຄວາມລຳບາກ ເພື່ອຢາກຈະຮູ້ຈິດໃຈຂອງພວກທ່ານເປັນຢ່າງໃດ ແລະທ່ານຈະເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງຫລືບໍ່? " ບໍ່ແມ່ນການທົດສອບທຸກຢ່າງນັ້ນມາຈາກພຣະເຈົ້າແຕ່ບາງຢ່າງໄດ້ເກີດຂຶ້ນມາເພື່ອຢາກຮູ້ວ່າອັນໃດຢູ່ໃນຈິດໃຈຂອງພວກເຮົາ ແລະເພື່ອພວກເຮົາຈະຕັດສິນໃຈວ່າຈະຍ່າງໄປກັບພຣະເຈົ້າດ້ວຍການເຊື່ອຟັງຫລືບໍ່?.

## ໒. <u>ການເຊື່ອຟັງຢ່າງແຂງແຮງ</u> (ປະຖົມມະການ ໒໒:3-10)

ເຖິງການທົດສອບນັ້ນເປັນການຍາກລຳບາກ ແຕ່**ອັບຣາຮາມ** ຕັດສິນໃຈເຊື່ອຟັງພຣະເຈົ້າຢ່າງເດັດດ່ຽວ ແລະເຊື່ອຟັງເທົ່ານັ້ນ ຕ້ອງໃຊ້ເວລາເດີນທາງອອກໄປເຖິງ 3 ວັນ. ໃຫ້ລອງຄິດເບິ່ງເປັນການຍາກປານໃດສຳລັບລາວ ເພາະຕ້ອງຊອກເອົາຟືນເພື່ອຈະໄດ້**ເຜົາຖວາຍບູຊາ** ນັ້ນແມ່ນການຂ້າແລະເຜົາ**ຜູ້ເປັນລູກ.** ເວລາອອກເດີນທາງໄປກັບລູກກໍກິນເວລາເຖິງສາມວັນມາແລ້ວ ແລະຮູ້ໃນໃຈວ່າຈຳເປັນຕ້ອງໄດ້ເຜົາອີຊາກ. ລາວຕ້ອງການໃຫ້ລູກຊາຍຊ່ອຍແບກເອົາຟືນນັ້ນຂຶ້ນໄປເທິງພູເຂົາ. ມັນເປັນການທຸກໃຈຫລາຍເທົ່າໃດເວລາອັບຣາຮາມໄດ້ເອົາຟືນໃສ່ບ່າຂອງລູກແລະຮູ້ວ່າຟືນນັ້ນຈະໄດ້ໃຊ້ເຜົາຜູ້ແບກ? ເວລານັ້ນລູກກໍໄດ້ຖາມຫລາຍໆຄຳຖາມ ແລະລາວກໍຕ້ອງໄດ້ຕອບວ່າ ແລ້ວຈະຮູ້ເອງວ່າແມ່ນຫຍັງຈະເກີດຂຶ້ນໃນເວລາຕໍ່ໄປ?

ການເຊື່ອຟັງພຣະເຈົ້າເຮັດໃຫ້ອັບຣາຮາມມັດລູກຊາຍ ແລະເອົາລູກຂຶ້ນໃສ່**ເຕົາເຜົາຖວາຍບູຊາ.** ຕອນນີ້ອັບຣາຮາມໄດ້ເຊື່ອຟັງພຣະເຈົ້າ ແຕ່ກ່ອນສາມວັນນັ້ນລາວກໍມີຄວາມທຸກຈິດໃຈມາແລ້ວເວລາເດີນທາງດ້ວຍຄວາມເຊື່ອຟັງນີ້. ແຕ່ວ່າພຣະຄັມພີບໍ່ໄດ້ກ່າວເຖິງຄວາມເປັນທຸກຂອງລາວ, ແຕ່ພວກເຮົາກໍອາດພາບໄດ້ເຖິງຊີວິດຢ່າງນັ້ນເພາະລາວເຊື່ອຟັງຄຳສັ່ງຂອງພຣະເຈົ້າ.

ພຣະຄຳຂໍ້ນີ້ໄດ້ເວົ້າເຖິງຈຸດສຳຄັນບາງຢ່າງໃນການເຊື່ອຟັງ. ເວລາອັບຣາຮາມໄດ້ປະພວກຜູ້ຮັບໃຊ້ໄວ້ທາງຫລັງ

### ໄດ້ຮູ້ເຫັນ ຫລື ຈັດຫາມາໃຫ້

Ra'a ເປັນພາເຮັບເຣີ ໃນປະຖົມມະການ ໒໒ ຂໍ້ 4, 8, 13, ແລະ 14. ຄວາມໝາຍງ່າຍໆກໍແປວ່າ **ຢາກເຫັນ** ແລະຄຳນີ້ສາມາດແປໄດ້ອີກວ່າ **ຈັດຫາມາໃຫ້.** ອັບຣາຮາມ ໄດ້ເຫັນບ່ອນ (4) ແລະລາວໄດ້ເຫັນ ແກະເຖິກ (13). ແຕ່ອັບຣາຮາມ ໄດ້ຕອບຜູ້ເປັນລູກວ່າ ພຣະເຈົ້າຈະເປັນຜູ້ຈັດຫາແກະມາໃຫ້ເພື່ອເອົາມາເຜົາຖວາຍ (8), ແລະລາວໄດ້ຕັ້ງຊື່ບ່ອນນັ້ນວ່າ "ພຣະຜູ້ເປັນເຈົ້າຊົງຈັດຫາໃຫ້." ເພາະວ່າ ພຣະເຈົ້າໄດ້ຈັດຫາມາໃຫ້ແທ້ເທິງພູ ເຂົາຂອງພຣະເຈົ້າ. (14).

ພ້ອມດ້ວຍຝູງລໍ, ອັບຣາຮາມສັນຍາກັບພວກເຂົາວ່າ ລາວແລະລູກຈະກັບມາຫາອີກທີຫລັງ ເພາະລາວກັບລູກຊາຍຕ້ອງຂຶ້ນໄປເທິງພູເພື່ອນະມັສການ, ຄຳເວົ້ານັ້ນເປັນຄຳເວົ້າປົກປິດບາງຢ່າງ ຫລືເປັນຄຳເວົ້າເປັນພຽງຄຳຝັນເທົ່າ

ນັ້ນ? ນັກຂຽນຂອງພວກເຮັບເຣີບໍ່ໄດ້ຄິດຢ່າງນັ້ນ. "ແຕ່ອັບຣາຮາມຄິດວ່າພຣະເຈົ້າຊົງຣິດສາມາດໃຫ້ມີການຄືນມາຈາກຕາຍໄດ້ ແລະເພິ່ນກໍໄດ້ຮັບລູກນັ້ນປຽບເໝືອນຄືນມາຈາກຕາຍ." (ເຮັບເຣີ 11:19). ອັບຣາຮາມມີຄວາມເຊື່ອຟັງໂດຍໄວແລະກໍສືບຕໍ່ເພາະລາວມີຄວາມເຊື່ອໃນພຣະເຈົ້າ, ເຊື່ອວ່າພຣະບິດາໄດ້ຊ່ອຍໃຫ້ອົງພຣະບຸດເປັນຄືນມາຈາກຕາຍແລະພຣະອົງຮັກສາຄໍາສັນຍາສເມີ. ຄວາມເຊື່ອຢ່າງນັ້ນກໍບໍ່ໄດ້ເຮັດໃຫ້ການທົດລອງນັ້ນງ່າຍລົງແຕ່ປະການໃດ.

ຂໍ້ສໍາຄັນກໍແມ່ນເວລາອີຊາກຖາມວ່າ, "**ແກະທີ່ຈະເອົາມາຖວາຍນັ້ນຢູ່ໃສ?**" ຜູ້ເປັນພໍ່ໄດ້ຕອບວ່າ, "**ພຣະເຈົ້າຈະເປັນຜູ້ຈັດຫາມາໃຫ້.**" ໃນຄວາມຄິດຂອງອັບຣາຮາມແລ້ວເວລາຍ່າງຂຶ້ນໄປເທິງພູ ແກະໂຕທີ່ພຣະເຈົ້າຈັດຫານັ້ນແມ່ນຜູ້ທີ່ກໍາລັງແບກຟືນໄປນໍາກັນນີ້. ພຣະເຈົ້າປະທານອີຊາກໃຫ້ອັບຣາຮາມ ແລະສັນຍາຈະໃຫ້ລາວມີອະນາຄົດດີ ແລະອັບຣາຮາມໄດ້ເຊື່ອຟັງພຣະສັນຍາອັນຍິ່ງໃຫຍ່ຂອງພຣະເຈົ້າ.

ໃນທີ່ສຸດ ເມື່ອຂຶ້ນໄປເທິງພູເຖິງບ່ອນຈະບູຊາຖວາຍ ອັບຣາຮາມໄດ້ຖອດມີດອອກມາ ແລະຍັງເຊື່ອຢູ່ວ່າໃນວິທີໃດວິທີນຶ່ງພຣະເຈົ້າຈະຈັດຫາຂອງຖວາຍມາໃຫ້. ພວກເຮົາກໍເຊັ່ນດຽວກັນ ໃຫ້ພາກັນໄວ້ວາງໃຈໃນພຣະເຈົ້າໃນເມື່ອໄດ້ພົບກັບບັນຫາຍາກລໍາບາກໃນເມື່ອມີການທົດສອບເກີດຂຶ້ນ. ໃຫ້ພວກເຮົາເຊື່ອຟັງພຣະເຈົ້າແລະຕັ້ງໝັ້ນຄົງຢູ່ໃນພຣະອົງ. ໃຫ້ເຮັດເໝືອນອັບຣາຮາມ, ໃຫ້ເຮັດຕາມພຣະເຈົ້າສັ່ງ ເຖິງວ່າມັນຈະເປັນການຍາກລໍາບາກຫລາຍເທົ່າໃດກໍຕາມ. ໃຫ້ພວກເຮົາສືບຕໍ່ຢູ່ໃນຄວາມເຊື່ອຢ່າງໝັ້ນຄົງ. ຫລາຍໆເທື່ອກ້າວທໍາອິດທີ່ຍ່າງໄປກັບພຣະເຈົ້ານັ້ນອາດຈະສະບາຍຫລາຍກວ່າການຍ່າງສືບຕໍ່ໄປກັບພຣະເຈົ້າກໍເປັນໄດ້.

## 3. <u>ບໍາເນັດຂອງການເຊື່ອຟັງ</u> (ປະຖົມມະການ 22:11-14, 17-19)

ການທົດສອບທີ່ພຣະເຈົ້າໃຫ້ແກ່ອັບຣາຮາມນັ້ນເປັນການສອບຍາກທີ່ສຸດ, ແຕ່ຜົນຕອບແທນທີ່ໄດ້ຮັບນັ້ນດີຫລາຍ. ພຣະເຈົ້າໄດ້ອວຍພຣະພອນທີ່ເຫັນໄດ້ງ່າຍ. ນຶ່ງ, **ເທວະດາ**ຂອງອົງພຣະເຈົ້າໄດ້ຮ້ອງໃສ່ອັບຣາຮາມ **ບໍ່ໃຫ້ລົງມືໃສ່ອີຊາກ.** ລາວໄດ້ຜ່ານການທົດສອບໄດ້ເປັນຢ່າງດີ ລາວເອງກໍຮູ້ວ່າລາວມີຄວາມ**ຢໍາເກງ**ຕໍ່ພຣະເຈົ້າ ໃນສະພາບສຸກເສີນແລະທົດສອບນັ້ນ. ອັບຣາຮາມ **ໄດ້ເບິ່ງຂຶ້ນໄປ ແລະໄດ້ເຫັນແກະເຖິກໂຕນຶ່ງທີ່ເຂົາມັນຄາຢູ່ທີ່ພຸ່ມໝາມ** ຊຶ່ງເປັນໂຕທີ່ໄດ້ໃຊ້ເປັນເຄື່ອງເຜົາບູຊາຕໍ່ພຣະເຈົ້າຊຶ່ງພຣະອົງເອງເປັນຜູ້ຈັດຫາມາໃຫ້. ອັບຣາຮາມໄດ້ເອີ້ນບ່ອນນັ້ນວ່າ, "**ພຣະເຈົ້າເປັນຜູ້ຈັດຫາມາໃຫ້.**" ຕອນນີ້ເພິ່ນໄດ້ຮຽນບາງຢ່າງເຖິງໂຕເອງແລະອົງພຣະຜູ້ເປັນເຈົ້າ.

ບາງຄັ້ງບໍາເນັດຈາກພຣະເຈົ້ານັ້ນເຫັນວ່າຢູ່ໄກ. ພຣະເຈົ້າກໍຍັງໄດ້**ອວຍພຣະພອນ**ໃຫ້ອັບຣາຮາມໃຫ້ມີ**ເຊື້ອຍສາຍຫລາຍເໝືອນດວງດາວໃນທ້ອງຟ້າ ແລະເມັດດິນຊາຍໃນທະເລ. ເຊື້ອສາຍຂອງລາວໄດ້ປົກຄອງປະຕູຂອງພວກສັດຕູ** ແລະກໍໄດ້ກັບກາຍເປັນທີ່**ພຣະພອນຕໍ່ຄົນທັງໂລກ.** ສິ່ງທີ່ເວົ້າມານີ້ເປັນບໍາເນັດອັນຍິ່ງໃຫຍ່ ແລະກໍເປັນການທົດສອບຄັ້ງສູງສຸດ.

ການທົດສອບຄັ້ງຍິ່ງໃຫຍ່ໃນຊີວິດຂອງຂ້າພະເຈົ້າແມ່ນເວລາຖືກສອບຖາມຈາກອາຈານຫລາຍໆຄົນກ່ອນຈະໄດ້ຮັບປຣິນຍາເອກ. ຂ້າພະເຈົ້າຕ້ອງໄດ້ຕອບຂໍ້ພຣະຄັມພີເປັນພາສາກຣີກທີ່ບໍ່ເຄີຍເຫັນມາກ່ອນ. ເວລາທົດສອບໝົດແລ້ວຂ້າພະເຈົ້າຮູ້ສຶກວ່າໝົດແຮງອ່ອນໄປທັງໂຕນໂຕ. ແຕ່ຢ່າງໃດຕໍາຕາມເຫັນວ່າບໍາເດັດທີ່ໄດ້ຮັບນັ້ນຫລາຍທີ່ສຸດ. ເປົ້າໝາຍທີ່ຂ້າພະເຈົ້າມີໄວ້ສໍາລັບການສຶກສາກໍໄດ້ສໍາເຣັດລົງ. ການສອບເສັງອັນຍິ່ງໃຫຍ່ນໍາໄປເຖິງລາງວັນອັນຍິ່ງໃຫຍ່ເໝືອນກັນ.

ພວກເຮົາຕ້ອງຈໍາໄວ້ສເມີວ່າພຣະເຈົ້າໄດ້ໃຫ້ບໍາເນັດແກ່ຄົນທີ່ເຊື່ອຟັງ. ບາງຄັ້ງພວກເຮົາອາດບໍ່ເຫັນຜົນດີນັ້ນໃນທັນໃດໂລດ, ແຕ່ໃຫ້ພວກເຮົາຈົ່ງໝັ້ນໃຈເທີ້ນວ່າພຣະເຈົ້າໃຫ້ບໍາເນັດແກ່ເຮົາໃນເວລາຫຍຸ້ງຍາກລໍາບາກທີ່ສຸດ.

## ບົດຮຽນໃນຊີວິດ

ຫລາຍເທື່ອພຣະເຈົ້າໄດ້ທົດສອບລູກຂອງພຣະອົງວ່າມີຫຍັງຢູ່ໃນຈິດໃຈຂອງພວກເຂົາ. ຮູ້ແລ້ວວ່າການທົດສອບນີ້ບໍ່ໄດ້ເປັນສິ່ງງ່າຍ, ແຕ່ມັນເປັນການສະແດງໃຫ້ພຣະເຈົ້າຮູ້ວ່າລູກຂອງພຣະອົງມີການຖວາຍຕົວຢ່າງໃດຕໍ່ພຣະອົງ. ແນ່ນອນພຣະເຈົ້າໄດ້ໃຫ້ບຳເນັດຕໍ່ຜູ້ທີ່ເຊື່ອຟັງໃນເວລາສຸກເສີນໃນຊີວິດ ແລະພຣະອົງປາຖນາຢາກ ໃຊ້ການທົດສອບເພື່ອຈະໄດ້ຊ່ອຍລູກຂອງພຣະອົງໃຫ້ຈະເຣີນຂຶ້ນ ແລະຢູ່ໃກ້ຊິດກັບພຣະອົງ.

ການທົດສອບແລະການເຊື່ອຟັງຂອງອັບຣາຮາມໄດ້ຊ່ອຍພວກເຮົາຢ່າງໃດໃນທຸກວັນນີ້? ທ່ານຕ້ອງການ:

- ໃຫ້ກວດເບິ່ງວ່າທ່ານໄດ້ຖືກທົດສອບໃນເວລານີ້ ແລະມັນທົດສອບຄວາມເຊື່ອຂອງທ່ານບໍ່? ຢ່າຄິດວ່າການທົດສອບນັ້ນເປັນສິ່ງທີ່ພຣະເຈົ້າບໍ່ໄດ້ເປັນຫ່ວງຕໍ່ເຮົາ, ແຕ່ໃຫ້ເຫັນການທົດສອບນັ້ນເປັນຜົນດີ ເພື່ອເຮົາຈະໄດ້ເຫັນຄວາມສັດຊື່ຂອງພຣະເຈົ້າ. ໃນວິທີທາງໃດແດ່ທ່ານໄດ້ຖືກທົດສອບໃນປະຈຸບັນນີ້?
- ໃຫ້ຮຽນຮູ້ວ່າການທີ່ເຊື່ອຟັງພຣະເຈົ້ານັ້ນມີຣາຄາແພງ. ໃຫ້ຮູ້ວ່າກ້າວທຳອິດໃນການເຊື່ອຟັງພຣະເຈົ້າອາດເປັນການຍາກທີ່ສຸດ ແລະການທີ່ຍ່າງໄປໂດຍການເຊື່ອຟັງກໍຍາກຫລາຍກວ່າບາດກ້າວທຳອິດອາດເປັນໄດ້. ໃນເວລາໃດການເຊື່ອຟັງຂອງທ່ານເປັນສິ່ງລຳບາກ?

ບາງຄັ້ງການທົດສອບທີ່ພວກເຮົາຕ້ອງຜ່ານນັ້ນຍຶດເຮົາອອກແລະເປັນການທ້າທາຍຕໍ່ຊີວິດ, ແຕ່ພຣະເຈົ້າສັນຍາວ່າຜູ້ທີ່ເຊື່ອຟັງພຣະອົງຈະບໍ່ຕົກເສັຽໄປ. ພຣະເຈົ້າຈະເຣັດໃຫ້ສຳເຣັດສິ່ງທີ່ພຣະອົງໄດ້ເລີ້ມຕົ້ນໃນພວກເຮົາ. (ຟລບ. 1:6)

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.